ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ສຳນັກງານ ຄຄຊ
ເລກທີ 306
ວັນທີ 19 MAR 2015
ໂທລະສັບ 021 217770

ເລກທີ: 11 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 17 MAR 2015

# ລາຍງານການເຄື່ອນໄຫວປະຈຳອາທິດ ທີ 02/03/2015 ຫາ 06/03/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນຕົວເລກທາງດ້ານເສດຖະກິດຂອງສະຫະລັດອອກມາດີ ເປັນຕົ້ນແມ່ນຕົວເລກ GDP ຂອງສະຫະລັດ ເພີ່ມຂຶ້ນ 2,2% ໃນໄຕມາດ 4/2015 ຊຶ່ງສູງກວ່ານັກວິເຄາະຄາດໄວ້ 2% ແລະ ຜົນສຳຫຼວດດັດຊະນີຄວາມເຊື່ອໝັ້ນຜູ້ບໍລິໂພກຂອງມະຫາວິທະຍາໄລແມັກຊິແກນເພີ່ມຂຶ້ນຈາກ 93,6 ໃນເດືອນ 1/2015 ເປັນ 95,4 ໃນເດືອນ 2/2015. ໃນຂະນະທີ່, ດັດຊະນີລາຄາການບໍລິການພາກເອກະຊົນຂອງຍີ່ປຸ່ນ ໃນເດືອນ 01/2015 ຫຼຸດລົງ 3,4% ທຽບໃສ່ເດືອນຜ່ານມາ. ສ່ວນເງິນບາດ ແລະ ເປໂຊແຂງຄ່າຂຶ້ນເມື່ອທຽບໃສ່ເງິນໂດລາສະຫະລັດຍ້ອນຕົວເລກ GDP ຂອງໄທ ເພີ່ມຂຶ້ນຈາກ 1,2% ໃນໄຕມາດ 3/2015 ເປັນ 1,7% ໃນໄຕມາດ 4/2015 ແລະ ຕົວເລກ GDP ຂອງຟີລິບປິນ ເພີ່ມຂຶ້ນຈາກ 0,7% ໃນໄຕມາດ 3/2015 ເປັນ 2,5% ໃນໄຕມາດ 4/2015.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 24/02/2015 | ອາທິດນີ້ 03/03/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ ໂດລາ | 1,1326 | 1,1189 | 1,22% |
| ໂດລາ/ເຢນ | 119,16 | 119,78 | -0,52% |
| ໂດລາ/ບາດ | 32,56 | 32,34 | 0,69% |
| ໂດລາ/ເປໂຊ | 44,29 | 44,08 | 0,48% |
| ໂດລາ/ຣູເປັຍ | 12.874,67 | 12.957,44 | -0,64% |
| ໂດລາ/ໂດລາສິງກະໂປ | 1,3604 | 1,3636 | -0,23% |
| ໂດລາ/ຢວນ | 6,2546 | 6,2743 | -0,31% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 1,51% ຈາກ 49,23 ໂດລາ/ບາເຣວ ມາເປັນ 49,98 ໂດລາ/ບາເຣວ ຍ້ອນຄວາມຕ້ອງການນ້ຳມັນຂອງໂລກເພີ່ມຂຶ້ນ ເປັນຕົ້ນແມ່ນສະຫະລັດ ເນື່ອງຈາກສະພາບອາກາດທີ່ໜາວໃນສະຫະລັດ ເຮັດໃຫ້ຄວາມຕ້ອງການເຊື້ອເພີງຫຼາຍຂຶ້ນ ຊຶ່ງຍັ້ງຢືນໄດ້ຈາກຄັງສຳຮອງນ້ຳມັນແຮັດຊັງຂອງສະຫະລັດປະຈຳອາທິດທີ 20/02/2015 ຫຼຸດລົງ 3,1 ລ້ານບາເຣວ ແລະ ຄັງສຳຮອງນ້ຳມັນກະຊວນຫຼຸດລົງ 2,7 ລ້ານບາເຣວ;

ລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 0,59% ຈາກ 1.200,03 ໂດລາ/ອອນ ມາເປັນ 1.207,15 ໂດລາ/ອອນ ຍ້ອນນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກງກຳໄລ ແລະ ປ້ອງກັນຄວາມສ່ຽງ ຈາກຄວາມຜັນຜວນຂອງເສດຖະກິດໂລກ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,03% ສຳລັບອັດຕາ ທຫລ ແຕ່ອ່ອນຄ່າລົງ 0,004% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,30% ສຳລັບອັດຕາ ທຫລ ແລະ ອ່ອນຄ່າລົງ 0,02% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,33% ສຳລັບອັດຕາ ທຫລ ແລະ ອ່ອນຄ່າລົງ 0,13% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 1,57% ສຳລັບອັດຕາ ທຫລ ແຕ່ແຂງຄ່າຂຶ້ນ 0,06% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 22/02/2015 | | | ອາທິດນີ້ 28/02/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະການ[1] | | | | | | | | | |
| ໂດລາ | 8.086,72 | 8.119,94 | 8.107,19 | 8.090,02 | 8.120,95 | 8.104,61 | -0,04% | -0,01% | 0,03% |
| ບາດ | 250,36 | 251,44 | 250,97 | 251,20 | 252,32 | 251,73 | -0,33% | -0,35% | -0,30% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.104,43 | 8.137,93 | 8.121,18 | 8.105,02 | 8.138,00 | 8.121,51 | -0,01% | -0,001% | -0,004% |
| ບາດ | 250,86 | 251,93 | 251,40 | 250,98 | 251,93 | 251,46 | -0,05% | 0,00% | -0,02% |
| ຜົດຕ່າງອັດຕາ ທຫລ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,22% | 0,22% | 0,17% | 0,19% | 0,21% | 0,21% | | | |
| ບາດ | 0,20% | 0,20% | 0,17% | -0,08% | -0,15% | -0,11% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ເພີ່ມຂຶ້ນ 0,02% ທຽບໃສ່ວັນທີ 27/02/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 47,39%.
- ປະລິມານເງິນ $M_2$ ຫຼຸດລົງ 0,44% ເມື່ອທຽບໃສ່ວັນທີ 27/02/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 23,29%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 03/03/2015) ເຫັນວ່າ ທທກ ຂາຍໂດລາສຸດທິ 1 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 43,35 ລ້ານໂດລາ ແລະ ຂາຍໂດລາໄດ້ 44,35 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 498,56 ລ້ານບາດ (ໃນນີ້ ຊື້ບາດໄດ້ 466,12 ລ້ານບາດ ແລະ ຂາຍບາດ

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ໄດ້ 964,68 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາ ເພີ່ມຂຶ້ນ 13,55% ແລະ ເພີ່ມຂຶ້ນ 11,41% ສໍາລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈໍານວນ 8,63 ລ້ານໂດລາ ແລະ ເງິນບາດມີ ຈໍານວນ 233,31 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈໍານວນ 6,10 ລ້ານໂດລາ ແລະ ຂາຍບາດສຸດທິ ຈໍານວນ 100 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈໍານວນ 12,71 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈໍານວນ 425,82 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 24/02/2015 | | ອາທິດທີ 03/02/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 13,72 | 314,76 | 19,52 | 263,99 | 42,30% | -16,13% |
| - ທ/ຄທຸລະກິດອື່ນໆ | 27,82 | 98,77 | 23,83 | 202,12 | -14,35% | 104,63% |
| ລວມຊື້: | 41,54 | 413,54 | 43,35 | 466,12 | 4,36% | 12,72% |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 21,12 | 234,89 | 27,10 | 185,20 | 28,29% | -21,15% |
| - ທ/ຄທຸລະກິດອື່ນໆ | 14,57 | 635,85 | 17,25 | 779,49 | 18,40% | 22,59% |
| ລວມຂາຍ: | 35,69 | 870,74 | 44,35 | 964,68 | 24,25% | 10,79% |
| ຊື້-ຂາຍສຸດທິ ທທກ | 5,85 | -457,20 | -1,00 | -498,56 | -117,09% | 9,05% |
| ຜິດດ່ຽງ ຊື້-ຂາຍ | 14,07 | -110,56 | -2,30 | -106,96 | -163,81% | 359,74% |
| ມູນຄ່າການຊື້-ຂາຍ | 77,23 | 1,284,27 | 87,70 | 1,430,80 | 13,55% | 11,41% |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 50,00 | 42,56 | 0,30 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 8,15 | 45,00 | 6,40 | 100,00 | | |
| ຊື້-ຂາຍສຸດທິ ທຫລ | 41,85 | -2,45 | -6,10 | -100,00 | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 16,62 | 210,42 | 8,63 | 233,31 | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,09 | 569,62 | 0,66 | 437,79 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 17,80 | 15,00 | 13,38 | 11,97 | | |
| ຊື້-ຂາຍສຸດທິ ທຫລ | -17,71 | 554,62 | -12,71 | 425,82 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈໍາເດືອນ 02/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 2,00% ຫຼຸດລົງ 0,04% ຈາກ 2,04% ໃນເດືອນ 01/2015.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ**

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 76,50 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 17% ທຽບໃສ່ອາທິດຜ່ານມາ.

**2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 810 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 26,57% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 773,48 ຕື້ກີບ ເພີ່ມຂຶ້ນ 74,78% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) (27/02-05/03/2015) ມີຈຳນວນ 1.390 ຄັ້ງ ໂດຍມີມູນຄ່າ 194,18 ຕື້ກີບ ເພີ່ມຂຶ້ນ 64,08% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 429 ຄັ້ງ.

**2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ປິດຢູ່ທີ່ 1.421,47 ຈຸດ ເພີ່ມຂຶ້ນ 0,55% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 633.153 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,20 ຕື້ກີບ ເພີ່ມຂຶ້ນ 235,58% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 78,67% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 7.129 ກີບ/ຮຸ້ນ ເພີ່ມຂຶ້ນ 219 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 177.227 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,26 ຕື້ກີບ ເພີ່ມຂຶ້ນ 426,08% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 75,43% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,50%[2].

ຮຸ້ນຂອງບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.102 ກີບ/ຮຸ້ນ ເພີ່ມຂຶ້ນ 16 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 357.047 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,53 ຕື້ກີບ ເພີ່ມຂຶ້ນ 173,57% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 83,72% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,28%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດຢູ່ທີ່ 10.000 ກີບ/ຮຸ້ນ ບໍ່ປ່ຽນແປງເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 13 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 4.004 ກີບ/ຮຸ້ນ ເພີ່ມຂຶ້ນ 152 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 97.579 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 390,73 ລ້ານກີບ ເພີ່ມຂຶ້ນ 357,75% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 73,33% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,69%[5].

**3. ວຽກງານອື່ນໆ ທີ່ພົ້ນເດັ່ນ.**

- ສຳເລັດການເປີດບັນຊີ CMIM ກັບ Singapore;
- ສຳເລັດການເຂົ້າຮ່ວມຝຶກອົບຮົມໃນຫົວຂໍ້ "Japan-IMF Macroeconomic Seminar for Asia (JISM)" ທີ່ປະເທດຍີ່ປຸ່ນ;

---

[2]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

- ສຳເລັດການຈັດກອງປະຊຸມ: ❶ ກອງປະຊຸມຄະນະກຳມະການດ້ານພິທີການ ແລະ ເນື້ອໃນ ເພື່ອການກະກຽມເປັນປະທານ ແລະ ເຈົ້າພາບກອງປະຊຸມອາຊຽນໃນປີ 2016 ຂອງ ທຫລ, ❷ ກອງປະຊຸມສະຫຼຸບແຜນງານໂຄງການ ໄລຍະທີ 2 ແລະ ພິທີເຊັນສັນຍາສືບຕໍ່ແຜນງານໂຄງການ AFP ໄລຍະ 03;
- ສຳເລັດການເຂົ້າຮ່ວມກອງປະຊຸມ: ❶ ກອງປະຊຸມ The series of ASEAN+3 Meeting ທີ່ ປະເທດ ເກົາຫຼີ, ❷ ກອງປະຊຸມປຶກສາຫາລືດ້ານນະໂຍບາຍກ່ຽວກັບ ການອອກພັນທະບັດເປັນສະກຸນເງິນທ້ອງຖິ່ນ ເພື່ອລະດົມທຶນໃນການສ້າງພື້ນຖານໂຄງລ່າງ ໃນອາຊຽນ+3 ທີ່ບາງກອກ ປະເທດໄທ, ❸ ກອງປະຊຸມສຳມະນາມາດຕະຖານດ້ານການບັນຊີ ແລະ ການລາຍງານຖານະການເງິນ ທີ່ສະຖາບັນການທະນາຄານ, ❹ ກອງປະຊຸມໃຫຍ່ຄັ້ງທີ III ຂອງຄະນະພັກຮາກຖານ ທະນາຄານການຄ້າຕ່າງປະເທດລາວ ທີ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;
- ສຳເລັດການຕ້ອນຮັບ ແລະ ເຮັດວຽກຮ່ວມກັບ ທ່ານ Theo Bikoi, ທີ່ປຶກສາດ້ານສະຖິຕິພາຍນອກ ຈາກຫ້ອງການ TA OLAM ຂອງ IMF ທີ່ມາຈັດສຳມະນາ ພາຍໃຕ້ໂຄງການ “Improving of External Sector Statistic in Asia and Pacific Region” ໃຫ້ແກ່ພະນັກງານ ທຫລ ທີ່ ທຫລ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2,000 ກີບໃໝ່ ລຸ້ນປີ 2011 ຈຳນວນ 60 ລ້ານໃບ;
- ສືບຕໍ່ເຂົ້າຮ່ວມກອງປະຊຸມປຶກສາຫາລືການແບ່ງຄວາມຮັບຜິດຊອບ ໃນການຄົ້ນຄວ້າຮ່າງນິຕິກຳກ່ຽວກັບວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍພາຍໃນ ທຫລ ທີ່ ໜ່ວຍງານຕ້ານການຟອກເງິນ;
- ສືບຕໍ່ຄົ້ນຄວ້າ: ❶ ຄົ້ນຄວ້າຄູ່ມືການປະຕິບັດ ໃຫ້ແທດເໝາະກັບສະຖາບັນການເງິນຈຸລະພາກໃນ ສປປ ລາວ, ❷ ຄົ້ນຄວ້າການເພີ່ມສະຖາບັນການເງິນຈຸນລະພາກ ເຂົ້າໃນບົດບັນທຶກຄວາມເຂົ້າໃຈ ແລະ ປຶກສາຫາລື ລະຫວ່າງ ກົມຄຸ້ມຄອງສະຖາບັນການເງິນ ແລະ CARD ກ່ຽວກັບ MOU ເພື່ອຮ່າງເປັນການຕົກລົງໃຫ້ການຊ່ວຍເຫຼືອ Term of Agreement (TA), ❸ ຄົ້ນຄວ້າການສະເໜີຂອງ IMF ສະເໜີແຕ່ງຕັ້ງພະນັກງານ ທຫລ ເຂົ້າຮ່ວມໂຄງການສະໜອງຂໍ້ມູນດ້ານນິຕິກຳຂອງທະນາຄານກາງ;
- ກະກຽມຄົ້ນຄວ້າຮັບເອົາຊ່ຽວຊານດ້ານການຝຶກອົບຮົມຂະແໜງການເງິນຈຸນລະພາກ Mr. Frank Mueller ປະຈຳສະມາຄົມການເງິນຈຸນລະພາກ.

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ພາສີ ພິມມະກອນ